# ຄວາມຮູ້ພູມປັນຍາທ້ອງຖິ່ນ

# ການປູກຜັກບົ່ວ



ຂຽນໂດຍ: ນາງ ຈຳປາທອງ

ຂໍ້ມູນຈາກບ້ານ: ບ້ານຫ້ອມ ເມືອງ ຫາດຊາຍຟອງ

ນະຄອນຫລວງວຽງຈັນ

ປີ 2006

PDF created with pdfFactory Pro trial version www.pdffactory.com

PDF created with pdfFactory Pro trial version www.pdffactory.com

# ຄວາມຮູ້ພູມປັນຍາທ້ອງຖິ່ນ
# “ການປູກຜັກບົ່ວ”

ຮີບໂຮມແລະຈັດໜ້າໂດຍ: ນາງ ຈັນທະຈອນ

ແຕ້ມໂດຍ: ທ້າວ ສິດປະກອນ ທົງອາມາດ

ຮຽບຮຽງໂດຍ: ອ ຈ ໂພໄຊຈັນທະວົງສາ

ອ.ຈ ເກດມະນີ ບັນດາລັກ

ອ.ຈ ຄຳໄຫວ ອິນທະວົງ

ອ.ຈ ລັ່ງ ແສງດາລາ

ອ.ຈ ທອງຂັນ ສິລິໂພຄຳ

ເຈົ້າຂອງ: ພະແນກສຶກສານະຄອນຫລວງ ແລະ

ສູນອົບຮົມຮ່ວມພັດທະນາ

PDF created with pdfFactory Pro trial version www.pdffactory.com

# ຄຳນຳ

ປຶ້ມພູມປັນຍາທ້ອງຖິ່ນເຫຼັ້ມນີ້ ໄດ້ມາຈາກການຂຽນ ຂອງອາສາສະໝັກ ຊຶ່ງໄດ້ຮັບການຮຽບຮຽງເບື້ອງຕົ້ນຈາກຄະນະອຳນວນການສູນອົບຮົມຮ່ວມພັດທະນາ.

ປຶ້ມເຫຼັ້ມນ້ອຍໆນີ້ໄດ້ບັນຈຸເອົາເນື້ອໃນທີ່ເວົ້າເຖິງຫົວຂໍ້ໃດໜຶ່ງໂດຍມີຫຼາຍກິດຈະກຳທີ່ຈະເປັນການທົດລອງ ເອົາຄວາມຮູ້ທ້ອງຖິ່ນເຂົ້ານຳພາແລະສິດສອນນັກຮຽນຊັ້ນປະຖົມໂດຍເອົາບົດທີ່ງ່າຍສອນຊັ້ນ ປ. 1 ປໍ 2 ແລະ ບົດທີ່ຍາກກໍສອນຊັ້ນໃຫຍ່ຂຶ້ນໄປ.

ຄະນະຈັດທຳຄິດວ່າ ປຶ້ມເຫຼັ້ມນີ້ຄົງ ເປັນບ່ອນອີງອັນໜຶ່ງໃຫ້ແກ່ຄູອາຈານກໍຄືອາສາສະໝັກ ທີ່ຈະໄປສອນເດັກປະຖົມບໍ່ຫຼາຍກໍໜ້ອຍ

ຄະນະຈັດທຳຄິດວ່າຍັງມີຫຼາຍບັນຫາທີ່ຍັງບໍ່ທັນພຽງພໍ ແລະຂາດໄປຫວັງວ່າຄົງໄດ້ຮັບອະໄພຈາກທຸກໆທ່ານພວກເຮົາພ້ອມທີ່ຈະປັບປຸ່ງນຕາມຄວາມເໝາະສົມ.

ຄະນະຈັດທຳ

PDF created with pdfFactory Pro trial version www.pdffactory.com

## ຄວາມເປັນມາ

ຜັກບົ່ວແມ່ນພຶດສະນິດໜຶ່ງທີ່ນຳມາໃຊ້ປຸງແຕ່ງອາຫານ, ເປັນຜັກຫອມເພື່ອປະກອບກັບການປຸງແຕ່ງອາຫານຫຼາຍຢ່າງໄດ້ທັງໃບ ແລະ ຫົວ, ແລະເປັນຜັກຫອມທີ່ເກັບຫົວແກ່ແລ້ວໄວ້ກິນດົນ.

## ອຸປະກອນ(ສ່ວນປະກອບ)

ແນວຜັກບົ່ວໜ້ອຍຫຼາຍຕາມຄວາມຕ້ອງການ



+ເຟືອງ



PDF created with pdfFactory Pro trial version www.pdffactory.com

+ ດິນ



+ ແກບ



ມີດສໍາລັບປາດຜັກບົ່ວ



PDF created with pdfFactory Pro trial version www.pdffactory.com

## + ຂັ້ນຕອນໃນການເຮັດ

+ແບ່ງດິນໃຫ້ດີໆໄຖສອງເທື່ອເພື່ອຄາດຫຍ້າແປງດິນໃຫ້ເປັນໜານ (ໜານນ້ອຍໃຫຍ່ຕາມຄວາມຕ້ອງການຂອງຜູ້ປູກ)



+ ປາດຜັກບົ່ວໄວ້ຕາມຄວາມຕ້ອງການທີ່ຈະປູກ



+ ນຳຫົວຜັກທີ່ເຮົາຈະເອົາມາປູກລົງດິນໃຫ້ເປັນໜານ



PDF created with pdfFactory Pro trial version www.pdffactory.com

+ ການປູກຜັກບົ່ວ(ບາງຄົນກໍຫົດນ້ຳໃສ່ໜານກ່ອນຈຶ່ງປູກ)
(ບາງຄົນກໍບໍ່ຫົດນ້ຳປູກໃສ່ໂລດ)



+ຫຼັງຈາກນັ້ນກໍເອົາເຟືອງຫຼືແກບປົກໜ້າດິນຈາກນັ້ນກໍຫົດນ້ຳເຊົ້າແລະລງຖ້າມີເວລາຫຼືຫົດເຊົ້າກໍໄດ້ປະຕິບັດແນວນີ້ເປັນປົກກະຕິ



ປະມານ 1 ອາທິດຜັກບົ່ວກໍອອກໜໍ່ຂຶ້ນມາເປັນກົກອ່ອນ.



PDF created with pdfFactory Pro trial version www.pdffactory.com

ນັບແຕ່ມື້ອອກໜໍ່ມາໄດ້1 ອາທິດ ກໍໃສ່ຝຸ່ນຫົດນ້ຳຢູ່ສອງມື້ ກໍບາມື້ຫົດນ້ຳ, ປະມານໜຶ່ງມື້ຫຼືສອງມື້ກໍເລີ່ມຫົດໃໝ່ແລະໃສ່ຝຸ່ໃໝ່.



ປະຕິບັດແນວນີ້ຈົນກ່ວາຜັກບົ່ວຮອດເດືອນຫຼື 1 ເດືອນ ກັບ 10 ມື້ກໍນຳໄປຂາຍໄດ້.



## + ຄຸນປະໂຫຍດຂອງຜັກບົ່ວ.

- ຜັກບົ່ວເຮົາສາມາດນຳມາປຸງແຕ່ງອາຫານແລະປະສົມອາຫານເຊັ່ນລາບ, ແກງ, ປົ່ນປາແລະອື່ນໆ
- ເປັນສິນຄ້າສ້າງລາຍໄດ້ໃຫ້ແກ່ຄອບຄົວ.

PDF created with pdfFactory Pro trial version www.pdffactory.com

## ເຊີ້ງ: ການປູກຜັກບົ່ວ

ໂຮ.......................................ຮິວ

| | |
|---|---|
| ເຮົາມາເຮົາມາ | ມາປູກຜັກບົ່ວ |
| ປູກໄປໃຫ້ທົ່ວ | ໄຮ່ນາຮົ້ວສວນ |
| ພວກເຮົາມາຊວນ | ປູກໃຫ້ຫຼາຍໆ |
| ເອົາໄປສົ່ງຂາຍ | ຕາມທ້ອງຕະຫຼາດ |
| ບໍ່ໃຫ້ມັນຂາດ | ປະຈຳທຸກມື້ |
| ທຸກຄົນມາຊື້ | ປຸງແຕ່ງອາຫານ |

## ລຳ: ຜັກບົ່ວ (ລຳເດີນ)

| | |
|---|---|
| ໃນໃຈໂສກເສີ້ງ | ຍາກມີຄົນມາຊ່ວຍປູກຜັກບົ່ວ |
| ຈະປູກໄປທົ່ວໆ | ຕາມໄຮ່ຕາມນາ |
| ຈະບໍ່ມີນາ | ຄົນທີ່ຈະມາຊ່ວຍປູກ |
| ຕ້ອງອົດທົນປູກປູກໆ | ທຸກວັນທຸກຄືນ |
| ໂອ້ໆໆໆໆໆໆ | ສຸດຝືນ |
| ແນມເບິ່ງຜູ້ອື່ນ | ເຂົາຕ່າງກັນພ້ອມພຽງຮຽງໜ້າ |
| ແຕ່ເຮົານັ້ນນາ | ຂາດຜູ້ທີ່ຈະມາປູກຊ່ວຍຮຽງຂ້າງ |
| ຕ້ອງອົດປູກສ້າງ | ຜູ້ດຽວເລື້ອຍໆມາ |
| ໂອໆໆໆ | ສຸດເຫງົາ |

PDF created with pdfFactory Pro trial version www.pdffactory.com

ເພງ: ຜູ້ໃດກໍ່ປູກ( ທຳນອງເພງສາກົນ ປ໋ອບລ໋ອກ)

| | |
|---|---|
| ຜູ້ໃດກໍ່ປູກ | ປູກຜັກບົ່ວໃຫ້ໄດ້ຫຼາຍ |
| ປູກເພື່ອເອົາຂາຍ | ຢາກມີລາຍໄດ້ຕ້ອງພາກັນປູກໃຫ້ດີ |
| ຖ້າຄິດຈະປູກ | ກໍ່ຕ້ອງດູແລໃຫ້ດີ |
| ເລື່ອງແບບນີ້ | ຕ້ອງເອົາໃຈໃສ່ |
| ແລ້ວເຮົາຈະໄດ້ | ຜັກບົ່ວງາມໆ |

ກາບ: ປູກຜັກບົ່ວ

| | |
|---|---|
| ຢູ່ບ້ານຂ້ອຍ | ມີຜັກສວນຄົວ |
| ມີຜັກບົ່ວ | ປູກໄວ້ຫຼາຍໜານ |
| ເຊິ່ງມີການ | ວິທີການປູກ |
| ໃຫ້ຮຸ່ນລູກ | ປູກໄວ້ສວນຄົວ |
| ຕ້ອງມີຫົວ | ຜັກບົ່ວທີ່ແຫ້ງ |
| ແລ້ວຈຶ່ງແຕ່ງ | ແປງໜານເປັນຄັນ |
| ສອງສາມວັນ | ນຳຫົວໄປແຊ່ |
| ເຊີນເດີນາແວ່ | ປູກຜັກບົ່ງຊ່ວຍກັນ |

PDF created with pdfFactory Pro trial version www.pdffactory.com

# ຮູບ ແລະ ປະຫວັດຂອງຜູ້ຂຽນ



ຊື່: ນາງ ຈຳປາທອງ ສາຍສະຫວັນ

ອາຍຸ 30 ປີ

ອາຊີບ: ພະນັກງານ

ເປັນຫຍັງຈຶ່ງຢາກຂຽນຫົວຂໍ້ນີ້

ຢາກຂຽນເລື່ອງນີ້ຍ້ອນວ່າຢາກຮັກສາພູມປັນຍາໃນການປູກຜັກບົ່ວເພື່ອເຮັດໃຫ້ເດັກນ້ອຍໄດ້ຮຽນຮູ້ການປູກຝັງແລະຮູ້ວິທີເຮັດແລະນຳໄປປະຕິບັດຊ່ວຍຄອບຄົວຕົນເອງໄດ້

PDF created with pdfFactory Pro trial version www.pdffactory.com